# ສະພາບໍລິຫານທະນາຄານນະໂຍບາຍ

# ຕີລາຄາໝາກຜົນການເຄື່ອນໄຫວໃນ 9 ເດືອນ ຜ່ານມາ






ໃນວັນທີ 1/11/2011 ທີ່ສຳນັກງານທະນາຄານນະໂຍບາຍ ນະຄອນຫຼວງວຽງຈັນ ໄດ້ຈັດໃຫ້ມີກອງປະຊຸມສະພາບໍລິຫານທະນາຄານນະໂຍບາຍຢ່າງເປັນທາງການ ໂດຍພາຍໃຕ້ການເປັນປະທານຂອງທ່ານ ສົມພາວ ໄຟສິດ ເລຂາຄະນະພັກ, ຜູ້ວ່າການທະນາຄານແຫ່ງ ສປປ ລາວ, ປະທານສະພາບໍລິຫານທະນາຄານນະໂຍບາຍ, ພ້ອມນີ້ກໍມີຮອງປະທານ, ສະມາຊິກສະພາບໍລິຫານ, ຄະນະອຳນວຍການ, ຫົວໜ້າພະແນກ-ຫົວໜ້າສາຂາທະນາຄານນະໂຍບາຍທົ່ວປະເທດເຂົ້າຮ່ວມຢ່າງພ້ອມພຽງ.

ໃນກອງປະຊຸມດັ່ງກ່າວຍັງໄດ້ຕີລາຄາສະພາບການເຄື່ອນໄຫວສິນເຊື່ອໃນໄລຍະ 9 ເດືອນຂອງປີ 2011 ຜ່ານມາຈາກຫົວໜ້າພະແນກສິນເຊື່ອທະນາຄານນະໂຍບາຍ ເຊິ່ງມາຮອດເດືອນກັນຍາ 2011 ໄດ້ປ່ອຍສິນເຊື່ອທັງໝົດ 469,5 ຕື້ກີບ ໃນນີ້ເປັນສິນເຊື່ອໄລຍະສັ້ນ 219,6 ຕື້ກີບ, ໄລຍະກາງ 99,7 ຕື້ກີບ ແລະ ສິນເຊື່ອໄລຍະຍາວ 150,2 ຕື້ກີບ ແລະ ສິນເຊື່ອດັ່ງກ່າວໄດ້ປ່ອຍເຂົ້າໃນການແກ້ໄຂຄວາມທຸກຍາກໃນເມືອງເປົ້າໝາຍ ໂດຍປ່ອຍສິນເຊື່ອທັງໝົດ 291,6 ຕື້ກີບ ໃນນີ້ມີສິນເຊື່ອໄລຍະສັ້ນ 117,5 ຕື້ກີບ, ໄລຍະກາງ 61,2 ຕື້ກີບ ແລະ ໄລຍະຍາວ 112,6 ຕື້ກີບ ແລະ ໄດ້ປ່ອຍເຂົ້າໃນການປູກຝັງ 114,8 ຕື້ກີບ, ນຳໃຊ້ເຂົ້າໃນການລ້ຽງສັດ 113,8 ຕື້ກີບ, ປ່ອຍເຂົ້າໃນຫັດຖະກຳ 5,2 ຕື້ກີບ, ປ່ອຍເຂົ້າໃນການບໍລິການ 57,1 ຕື້ກີບ, ນອກນີ້ຍັງໄດ້ປ່ອຍສິນເຊື່ອເພື່ອສົ່ງເສີມການຜະລິດສິນຄ້າຕາມຈຸດສຸມນອກເມືອງເປົ້າໝາຍທັງໝົດໃນວົງເງິນ 178,3 ຕື້ກີບ.

ໃນດ້ານເກັບໜີ້ຕົ້ນທຶນໃນ 9 ເດືອນ ຜ່ານມາ ສາມາດປະຕິບັດໄດ້ 101% ຂອງແຜນການປີ, ເວົ້າລວມແລ້ວປະຈຸບັນມີຍອດສິນເຊື່ອທັງໝົດ 1.154 ຕື້ກີບ, ປະຕິບັດໄດ້ 96% ຂອງແຜນການປີ, ທຽບໃສ່ປີຜ່ານມາເພີ່ມຂຶ້ນ 30,4% .

ຈາກນັ້ນກອງປະຊຸມຍັງໄດ້ຮັບຟັງການສະຫຼຸບວຽກງານບັນຊີ-ການເງິນ ແລະ ສະຫຼຸບວຽກງານຫ້ອງການບໍລິຫານໃນ 9 ເດືອນ ຂອງປີ 2011 ແລະ ແຜນການ 3 ເດືອນທ້າຍປີ 2011 ນັບທັງວຽກງານສິນເຊື່ອຈາກບັນດາຫົວໜ້າພະແນກທີ່ກ່ຽວຂ້ອງຢ່າງລະອຽດ ແລະ ພ້ອມນັ້ນກໍໄດ້ມີການຊັກຖາມ, ເຈາະຈີ້ມ ແລະ ປະກອບຄຳຄິດຄຳເຫັນຫຼາຍບັນຫາທີ່ປີ່ນອ້ອມວຽກງານຂອງທະນາຄານນະໂຍບາຍ ແນໃສ່ເພື່ອຖອດຖອນ ແລະ ວາງທິດທາງໃຫ້ຖືກຕ້ອງ ແລະ ແທດເໝາະກັບເນື້ອໃນຈິດໃຈ 4 ບຸກທະລຸ ຂອງພັກ ໂດຍສະເພາະແມ່ນການປະກອບສ່ວນເຂົ້າໃນການແກ້ໄຂຄວາມທຸກຍາກຂອງປະຊາຊົນ.

ນອກນີ້ກໍໄດ້ສະເໜີແຜນຍຸດທະສາດຂອງທະນາຄານນະໂຍບາຍ ແຕ່ກໍພຽງແຕ່ເປັນພື້ນຖານ ແລະ ຄາດວ່າຈະມີການຮັບຮອງເອົາໃນກອງປະຊຸມສະພາບໍລິຫານ ທະນາຄານນະໂຍບາຍ ໃນເດືອນມັງກອນ ຂອງປີໜ້ານີ້.